# ກັບຄືນເຂົ້າເຮັດວຽກໄວ

ທ່ານຕ້ອງໄດ້ຕິດຕໍ່ກັບນາຍຈ້າງຢ່າງໜ້ອຍສຸດສາມຄົນ, ຫລືຮ່ວມໃນກິດຈະກັມຊອກວຽກສາມຢ່າງ ໃນຫ້ອງການ ແຫລ່ງຊອກວຽກປະຈຳເຂດຂອງທ່ານ, ແຕ່ລະອາທິດທີ່ທ່ານຂໍການຊ່ວຍເຫລືອ. ໃຫ້ໄປແວ່ແຫລ່ງຊອກວຽກ ເພື່ອມີແຫລ່ງຊອກວຽກຕ່າງໆທີ່ທ່ານຕ້ອງການໂດຍບໍ່ໄດ້ເສັຍຄ່າ. ນີ້ຮວມທັງການຮ່ວມປະຊຸມຊອກງານ, ຄອມພິວເຕີ້, ອັດສຳເນົາຕ່າງໆ, ໂທຣະສັບ, ເຄື່ອງແຟັກສ໌, ການເຂົ້າອິນເຕີແນັດຕ໌, ແລະໜັງສືພິມຕ່າງໆ, ເປີດເຂົ້າຫາ www. go2worksource.com ຫລື ໂທຫາ ເພື່ອຊອກຫ້ອງການທີ່ໃກ້ກັບທ່ານ.

## ຫ້ອງການແຫລ່ງວຽກງານຕ່າງໆ

Aberdeen • 360.533.9318
Auburn • 253.804.1177
Bellingham • 360.676.1521
Bremerton • 360.337.4810
Chehalis • 360.748.2360
Colville • 509.685.6158
Ellensburg • 509.925.5311
Everett • 425.258.6300

Goldendale • 509.773.5503
Kelso • 360.577.2250
Kennewick • 509.734.5900
Lakewood • 253.589.7119
Long Beach • 360.642.6213

Moses Lake • 509.766.2559
Mount Vernon • 360.416.3500
Oak Harbor • 360.675.5966
Olympia • 360.704.3600

Omak • 509.826.7310

Port Angeles • 360.457.2100
Port Hadlock • 360.379.5036
Pullman • 509.332.6549
Redmond • 425.861.3700
Renton • 206.205.3500
Seattle (North) • 206.440.2500
Seattle (Rainier) • 206.721.6000
Shelton • 360.427.2174
South Bend • 360.875.9470
Spokane • 509.532.3000
Stevenson • 509.427.4464
Sunnyside • 509.836.5405
Tacoma • 253.593.7300
Vancouver • 360.735.5000
Walla Walla • 509.527.4393
Wenatchee • 509.665.6605
White Salmon • 509.493.1210
Yakima • 509.574.0105

---

ຫ້ອງການຮັບປະກັນວຽກງານເປັນຫ້ອງການທີ່ສະເໝີພາບກັນໃນການໃຫ້ໂອກາດຣະຫວ່າງນາຍຈ້າງແລະຜູ້ໃຫ້ໂຄງການ ແລະ ການບໍຣິການຕ່າງໆ. ເຄື່ອງອຳນວຍຄວາມສະດວກຊ່ວຍເຫລືອຕ່າງໆກໍ່ແມ່ນມີໄວ້ໃຫ້ສຳຣັບຜູ້ທີ່ມີສະພາບພິການຕ່າງໆ. ເຄື່ອງອຳນວຍຄວາມສະດວກຊ່ວຍເຫລືອຕ່າງໆ ອາດຮວມນາຍພາສາທີ່ມີຄຸນນະພາບ, ຫລືເຄື່ອງທີ່ຣະພາບໃນການສື່ສານ (TTY) ສຳຣັບຜູ້ພິການໃນດ້ານການຟັງຫລືພິການດ້ານປາກເວົ້າ. ຜູ້ທີ່ເວົ້າພາສາອັງກິດບໍ່ໄດ້ດີ, ກໍ່ອາດຂໍເອົາການບໍຣິການໃນການແປພາສາໃຫ້ໄດ້ໂດຍບໍ່ຄິດຄ່າໃດໆຕໍ່ລູກຄ້າ ເພື່ອປະກອບທຸຣະກິດກັບທາງຫ້ອງການຊອກງານ.

EMS 10304 . Rev 6/08 . UI-jsk-apply-LA

# ທາງອິນເຕີແນັຕ ທາງໂທຣະສັບ

# ຂໍເງິນວ່າງງານ

Employment Security Department
WASHINGTON STATE

**ຂໍທາງ online ທີ່**

**esd.wa.gov**

# ຂ້າພະເຈົ້າຂໍເງິນວ່າງງານແນວໃດ?

ໃຫ້ເປີດເຂົ້າຫາ esd.wa.gov ເພື່ອກໍເງິນວ່າງງານ. ທ່ານສາມາດຂໍທາງທໍຣະສາຍ (online) ໄດ້ **ເວັ້ນເສັຍແຕ່:**

- ທ່ານເຮັດການຢູ່ສອງຣັດ ຫລືຫລາຍກວ່າ ໃນ 24 ເດືອນທີ່ຜ່ານມາ
- ທ່ານເຮັດການຢູ່ໃນຣັດດຽວທີ່ນັ້ນ ແຕ່ບໍ່ແມ່ນຢູ່ຣັດວໍຊິງຕັນໃນ 24 ເດືອນທີ່ຜ່ານມາ
- ທ່ານພິການໂດຍສິ້ນເຊີງຢ່າງໜ້ອຍ 13 ອາທິດຕໍ່ເນື່ອງກັນ ບ້ອນຄວາມເຈັບເປັນທີ່ກ່ຽວພັນກັບວຽກງານ ຫລືບໍ່ກ່ຽວພັນກັບວຽກງານ ຫລືການປ່ອຍເປັນໃດໜຶ່ງ, ແລະທ່ານຖືກປ່ອຍຈາກທ່ານໝໍຂອງທ່ານພາຍໃນ 12 ເດືອນທີ່ຜ່ານມາ.

# ຂ້າພະເຈົ້າຕ້ອງການຫຍັງແດ່ໃນຕອນຂໍເງິນນັ້ນ?

ເພື່ອຂໍເງິນວ່າງງານ ທ່ານຈະຕ້ອງການ:

- ເລກປະກັນສັງຄົມ
- ຊື່ແລະບ່ອນຢູ່ຕ່າງໆຂອງຜູ້ທີ່ທ່ານໄດ້ເຮັດການໃຫ້ໃນສອງປີທີ່ຜ່ານມານັ້ນທັງໝົດ
- ວັນທີ່ທ່ານເລີ່ມແລະປຸດວຽກກັບນາຍຈ້າງແຕ່ລະບ່ອນ
- ເຫດຜົນຂອງການອອກງານແຕ່ລະບ່ອນ
- ເລກບັດຖານະຄົນເຂົ້າເມືອງຂອງທ່ານ ຖ້າທ່ານຍັງບໍ່ເປັນສັນຊາດອະເມຣິກັນເທື່ອ

ຖ້າທ່ານຫາກໄດ້ເປັນທະຫານໃນ 24 ເດືອນທີ່ຜ່ານມາ, ພວກເຮົາຍັງຕ້ອງໄດ້ໃຫ້ທ່ານແຟັກສ໌ເຈັ້ຽເອກະສານປັ້ງຢືນການປ່ອຍພົ້ນໜ້າທີ່ທະຫານທີ່ເອີ້ນວ່າໜັງສືເລກທີ (Form DD214).

# ຂ້າພະເຈົ້າຈະຂໍໄດ້ຢູ່ໃສ?

ຖ້າທ່ານມີຄອມພິວເຕີ້, ທ່ານຂໍຢູ່ບ້ານກໍ່ໄດ້. ຖ້າບໍ່ມີທ່ານຈະໃຊ້ຄອມພິວເຕີ້ຢູ່ຫໍສະມຸດຫ້ອງຖິ່ນ ຫລືບ່ອນຫ້ອງການແຫລ່ງຂອກວຽກງານກໍ່ໄດ້.

# ຖ້າຂ້າພະເຈົ້າບໍ່ມີຄອມພິວເຕີ້ເດ?

ທ່ານກໍ່ຍັງຂໍເງິນວ່າງງານທາງໂທຣະສັບໄດ້ຄືກັນ. ໃຫ້ໂທ 1.800.318.6022 (TTY 1.800.365.8969).

# ຂ້າພະເຈົ້າຄວນຈະໂທຕອນໃດ?

ພວກເຮົາມີເວລາຄອຍຮັບໃຊ້ທ່ານແຕ່ວັນຈັນເຖິງວັນສຸກ ຈາກ 8:00 ໂມງເຊົ້າ ຫາ 5:00 ໂມງແລງ, ເວັ້ນເສັຍແຕ່ມື້ປຸດງານຂອງຣັດ. ພວກເຮົາອາດເປີດເພີ້ມເວລາຍາວອອກ ໃນຕອນຄົນໃຊ້ຫລາຍ.

ຖ້າເລກປະກັນສັງຄົມຂອງທ່ານຫາກສຸດດ້ວຍເລກ:

- 0 ເຖິງ 3, ໃຫ້ໂທໃນວັນຈັນ
- 4 ເຖິງ 7, ໃຫ້ໂທໃນວັນຄານ
- 8 ເຖິງ 9, ໃຫ້ໂທໃນວັນພຸດ

ກະຣຸນາໂທຕາມມື້ທີ່ຖືກແຕ່ງຕັ້ງໃຫ້ນັ້ນ. ຖ້າທ່ານພາດມື້ຂອງທ່ານ, ທ່ານອາດໂທວັນພຸດ, ວັນພະຫັດ, ຫລືວັນສຸກຂອງອາທິດດຽວກັນໂດຍບໍ່ມີການຊັກຊ້າເຣື່ອງການຮັບເງິນ.

ສຳຣັບລູກຄ້າທີ່ກຳລັງໄດ້ຮັບເງິນທວງເປັນປະຈຳຢູ່, ອາດໂທມື້ໃດຂອງອາທິດກໍ່ໄດ້.

# ຖ້າຂ້າພະເຈົ້າຕ້ອງການນາຍພາສາເດ?

ໃຫ້ໂທຫາສູນກາງໂທຣະສັບທີ່ເລກ 1-800-318-6022. ນາຍພາສາຈະມີໄວ້ບໍຣິການທ່ານໂດຍບໍ່ຄິດຄ່າໃດໆນຳທ່ານ.

# ຖ້າຂ້າພະເຈົ້າເປັນພິການເດ?

ຖ້າທ່ານເປັນພິການທີ່ກີດກັນທ່ານບໍ່ໃຫ້ໃຊ້ຄອມພິວເຕີ້, ຫລືໂທຣະສັບ, ໃຫ້ໄປແວ່ຫ້ອງການແຫລ່ງຊອກວຽກ (WorkSource). ພວກເຮົາຈະຊ່ວຍທ່ານຂໍເງິນວ່າງງານໃຫ້.